DEPARTMENT OF EDUCATION

# ຄຳແນະນຳ ແລະ ການປະຕິເສດຂອງພໍ່ແມ່/ຜູ້ປົກຄອງສຳລັບການເຂົ້າຮ່ວມຂອງນັກຮຽນການສອບເສັງໃນທົ່ວລັດ

ເອກະສານນີ້ໃຫ້ຂໍ້ມູນພື້ນຖານ ເພື່ອຊ່ວຍໃຫ້ພໍ່ແມ່/ຜູ້ປົກຄອງທຳການຕັດສິນໃຈດ້ວຍການໃຊ້ຂໍ້ມູນ ທີ່ເກີດຜົນປະໂຫຍດແກ່ລູກຂອງເຂົາເຈົ້າ, ໂຮງຮຽນ ແລະ ຊຸມຊົນ.

**ເປັນຫຍັງຈຶ່ງມີການສອບເສັງທົ່ວລັດ?**

ລັດມິນີໂຊຕາຖືເອົາລະບົບການສຶກສາຂອງຕົນເອງເປັນສຳຄັນ ແລະ ເຫັນຄຸນຄ່າຄວາມເປັນມືອາຊີບຂອງຜູ້ໃຫ້ການສຶກສາໃນລັດຂອງຕົນເອງ. ຜູ້ໃຫ້ການສຶກສາຂອງລັດມິນີໂຊຕາໄດ້ສ້າງມາດຕະຖານທາງດ້ານວິຊາການ ເຊິ່ງມີຄວາມເຂັ້ມແຂງ ແລະ ກຽມພ້ອມນັກສຶກສາຂອງພວກເຮົາເຂົ້າສູ່ການປະກອບອາຊີບ ແລະ ຮຽນຕໍ່ໃນວິທະຍາໄລ.

ການປະເມີນໃນທົ່ວລັດແມ່ນມາດຕະການອັນໜຶ່ງໃນວິທີທີ່ລັດພວກເຮົາວັດແທກຫຼັກສູດ ແລະ ການສອນໃນແຕ່ລະອັນຢູ່ໃນໂຮງຮຽນຂອງພວກເຮົາທີ່ກຳລັງປະຕິບັດຢູ່ໃຫ້ມີຄວາມສອດຄ້ອງກັບມາດຕະຖານທາງດ້ານວິຊາການ, ຮັບປະກັນໃຫ້ນັກຮຽນທຸກຄົນໄດ້ຮັບການສຶກສາທີ່ເທົ່າທຽມກັນ. ຜົນການປະເມີນໃນທົ່ວລັດພຽງແຕ່ເປັນເຄື່ອງມືອັນໜຶ່ງ ເພື່ອຕິດຕາມວ່າພວກເຮົາກຳລັງໃຫ້ການສຶກສາແກ່ນັກຮຽນຂອງພວກເຮົາ ເພື່ອຈະຮັບປະກັນໃຫ້ໄດ້ກຳລັງແຮງງານທີ່ເຂັ້ມແຂງ ແລະ ເປັນພົນລະເມືອງທີ່ມີຄວາມຮູ້ຄວາມສາມາດ.

## ເປັນຫຍັງການເຂົ້າຮ່ວມຈຶ່ງມີຄວາມສຳຄັນ?

ການປະເມີນໃນທົ່ວລັດເປັນພຽງແຕ່ມາດຕະການອັນໜຶ່ງໃນຄວາມສຳເລັດຂອງນັກຮຽນຂອງທ່ານ, ແຕ່ການມີສ່ວນຮ່ວມຂອງນັກຮຽນຂອງທ່ານມີຄວາມສຳຄັນທີ່ຈະໃຫ້ເຂົ້າໃຈໄດ້ວ່າ ການສຶກສາຢູ່ໃນໂຮງຮຽນຂອງນັກຮຽນຂອງທ່ານມີຄວາມສອດຄ້ອງກັບມາດຕະຖານທາງດ້ານວິຊາການໄດ້ຢ່າງມີປະສິດທິຜົນພຽງໃດ.

- ໃນການຈັດຕັ້ງປະຕິບັດກົດໝາຍຄວາມສຳເລັດຂອງນັກຮຽນທຸກໆຄົນຂອງລັດມິນີໂຊຕາ, ນັກຮຽນທີ່ບໍ່ເຂົ້າຮ່ວມໃນການປະເມີນທົ່ວລັດຈະບໍ່ໄດ້ຮັບຄະແນນບຸກຄົນ ແລະ ສຳລັບຈຸດປະສົງທາງດ້ານການຄິດໄລ່ຄວາມຮັບຜິດຊອບຂອງໂຮງຮຽນ ແລະ ເຂດ, ລວມທັງໂອກາດສຳລັບການສະໜັບສະໜູນ ແລະ ການຮັບຮູ້ຈະບໍ່ຖືກພິຈາລະນາວ່າ "ຄ່ອງແຄ້ວ".
- ນັກຮຽນຜູ້ທີ່ໄດ້ຮັບຄະແນນພ້ອມເຂົ້າຮຽນໃນວິທະຍາໄລຕາມ MCA ຂອງໄຮສະກູລແມ່ນບໍ່ຈຳເປັນຕ້ອງເຂົ້າຮຽນຫຼັກສູດທີ່ບໍ່ໄດ້ຮັບເຄຣດິດ, ບຳລຸງຄືນຢູ່ໃນວິທະຍາໄລ ຫຼື ມະຫາວິທະຍາໄລຂອງລັດມິນີໂຊຕາໃນຂົງເຂດວິຊາທີ່ກ່ຽວຂ້ອງ, ເຊິ່ງເຮັດໃຫ້ປະຢັດທັງເວລາ ແລະ ເງິນນັກຮຽນໄດ້.
- ຜູ້ໃຫ້ການສຶກສາ ແລະ ຜູ້ວາງນະໂຍບາຍນຳໃຊ້ຂໍ້ມູນຈາກການປະເມີນ ເພື່ອທຳການຕັດສິນໃຈກ່ຽວກັບຊັບພະຍາກອນ ແລະ ການສະໜັບສະໜູນທີ່ສະໜອງໃຫ້.
- ພໍ່ແມ່ ແລະ ສັງຄົມທົ່ວໄປໃຊ້ຂໍ້ມູນການປະເມີນ ເພື່ອປຽບທຽບໂຮງຮຽນຕ່າງໆ ແລະ ທຳການຕັດສິນກ່ຽວກັບບ່ອນທີ່ຈະຊື້ເຮືອນ ຫຼື ລົງທະບຽນລູກຫຼານຂອງທ່ານ.
- ຜົນງານຢູ່ໂຮງຮຽນທີ່ຖືກເປີດເຜີຍອອກສູ່ສັງຄົມ ແລະ ຄອບຄົວ ແລະ ຊຸມຊົນນຳໄປໃຊ້ແມ່ນມີຜົນກະທົບທາງລົບ ຖ້ານັກຮຽນບໍ່ເຂົ້າຮ່ວມໃນການປະເມີນ.
- ຜູ້ຮຽນພາສາອັງກິດບໍ່ເຂົ້າໂຄງການ ACCESS ຫຼື ACCESS for ELLs ທາງເລືອກອື່ນຈະບໍ່ໄດ້ຮັບຄະແນນເພື່ອໃຫ້ບັນລຸໄດ້ຕາມມາດຖານທີ່ມີຢູ່ຂອງໂຄງການຜູ້ຮຽນພາສາອັງກິດ.

## ມາດຕະຖານທາງດ້ານວິຊາການ ແລະ ການປະເມີນ

### ມາດຕະຖານທາງດ້ານວິຊາການແມ່ນຫຍັງ?

ມາດຕະຖານທີ່ເອີ້ນວ່າ Minnesota K–12 Academic Standards (ມາດຕະຖານທາງດ້ານວິຊາການ K-12 ຂອງລັດມິນີໂຊຕາ) ແມ່ນລະດັບຄາດໝາຍທົ່ວລັດສຳລັບຜົນສຳເລັດທາງດ້ານວິຊາການຂອງນັກຮຽນ. ພວກມັນລະບຸລະດັບຄວາມຮູ້ ແລະ ທັກສະ ທີ່ນັກຮຽນຕ້ອງບັນລຸໃນຂົງເຂດເນື້ອຫາ ແລະ ຖືກຈັດຕາມລະດັບເກຣດ. ເຂດໂຮງຮຽນກຳນົດວ່າ ນັກຮຽນຈະໄດ້ຕາມມາດຕະຖານແນວໃດຈາກການພັດທະນາຫຼັກສູດ ແລະ ວິຊາຮຽນໃຫ້ສອດຄ້ອງກັບມາດຕະຖານທາງດ້ານວິຊາການ.

### ຄວາມສຳພັນລະຫວ່າງການປະເມີນທາງວິຊາການທົ່ວລັດ ແລະ ມາດຕະຖານທາງດ້ານວິຊາການແມ່ນຫຍັງ?

ການປະເມີນທົ່ວລັດໃນວິຊາຄະນິດສາດ, ການອ່ານ, ແລະ ວິທະຍາສາດແມ່ນຖືກນຳມາໃຊ້ເພື່ອວັດແທກວ່າ ນັກຮຽນ, ແລະ ໂຮງຮຽນ ແລະ ເຂດການສຶກສາຂອງພວກເຂົາບັນລຸໄດ້ຕາມມາດຕະຖານທາງດ້ານວິຊາການຫຼືບໍ່. ການປະເມີນທົ່ວລັດແມ່ນມາດຕະການອັນໜຶ່ງໃຫ້ຮູ້ຈັກວ່າ ນັກຮຽນເກັ່ງທາງດ້ານເນື້ອຫາທີ່ເປັນສ່ວນຂອງການສອນປະຈຳວັນຂອງພວກເຂົານັ້ນຫຼາຍປານໃດ. ມັນຍັງເປັນມາດຕະການອັນໜຶ່ງໃຫ້ຮູ້ຈັກວ່າ ໂຮງຮຽນ ແລະ ເຂດການສຶກສາມີຄວາມເກັ່ງປານໃດໃນການວາງຫຼັກສູດຂອງພວກເຂົາ ແລະ ສອນມາດຕະຖານຕ່າງໆນັ້ນ.

| **ການປະເມີນກວາມລວມຂອງລັດມິນີໂຊຕາ (MCA)<br>ແລະ ການທົດສອບທັກສະທາງດ້ານວິຊາການຂອງລັດມິນີໂຊຕາ (MTAS)** | **ACCESS ແລະ ACCESS ທາງເລືອກອື່ນສຳລັບນັກຮຽນພາສາອັງກິດ** |
|---|---|
| • ອີງຕາມມາດຕະຖານທາງດ້ານວິຊາການຂອງລັດມິນີໂຊຕາ; ກຳນົດປະຈຳປີຢູ່ໃນເກຣດ 3-8 ແລະ ຢູ່ໃນໄຮສະກູລໃນພາກການອ່ານ ແລະ ວິຊາຄະນິດສາດ; ກຳນົດປະຈຳປີຢູ່ໃນ 5, 8 ແລະ ຢູ່ໃນໄຮສະກູລສຳລັບວິຊາວິທະຍາສາດ.<br>• ນັກຮຽນສ່ວນໃຫຍ່ເອົາການປະເມີນແບບ MCA.<br>• MTAS ແມ່ນທາງເລືອກໜຶ່ງສຳລັບນັກຮຽນທີ່ມີຄວາມພິການທາງດ້ານຄວາມຮັບຮູ້ເປັນບັນຫາຕົ້ນຕໍ. | • ອີງຕາມມາດຕະຖານການພັດທະນາພາສາອັງກິດຂອງ WIDA.<br>• ກຳນົດປະຈຳປີໃຫ້ກັບນັກຮຽນພາສາອັງກິດຢູ່ໃນເກຣດ K–12 ຢູ່ໃນພາກການອ່ານ, ຂຽນ, ຟັງ, ແລະ ເວົ້າ.<br>• ນັກຮຽນພາສາອັງກິດສ່ວນໃຫຍ່ສອບ ACCESS for ELLs.<br>• ACCESS for ELLs ທາງເລືອກອື່ນແມ່ນທາເລືອກໜຶ່ງສຳລັບນັກຮຽນພາສາອັງກິດທີ່ມີຄວາມພິການທາງດ້ານຄວາມຮັບຮູ້ເປັນບັນຫາຕົ້ນຕໍ. |

## ເປັນຫຍັງການປະເມີນເຫຼົ່ານີ້ຈຶ່ງມີປະສິດທິພາບ?

ລັດມິນີໂຊຕາເຊື່ອວ່າ ເພື່ອວັດແທກສິ່ງທີ່ນັກຮຽນກໍາລັງຮຽນຢູ່ໄດ້ຢ່າງມີປະສິດທິພາບ, ການສອບເສັງແມ່ນຕ້ອງເຮັດຫຼາຍກວ່າການຕອບຄໍາຖາມແບບໃຫ້ເລືອກໝາຍເອົາຄໍາຕອບຈາກຫຼາຍຕົວເລືອກ.

- ເພື່ອຕອບຄໍາຖາມຕ່າງໆ, ນັກຮຽນອາດຈະຕ້ອງໄດ້ພິມໃສ່ໃນຄໍາຕອບ, ລາກຮູບ ແລະ ຄໍາເວົ້າໄປວາງລົງ, ຫຼື ແປຜືນເສັ້ນສະແດງ ຫຼື ຂໍ້ມູນ.
- ການປະເມີນດ້ວຍ MCAs ໃນພາກການອ່ານ ແລະ ຄະນິດສາດແມ່ນເປັນແບບປັບປ່ຽນ, ເຊິ່ງກໍ່ໝາຍຄວາມວ່າ ຄໍາຕອບທີ່ນັກຮຽນຕອບກໍານົດຄໍາຖາມຕໍ່ໄປທີ່ນັກຮຽນຈະຕອບ.
- ການປະເມີນແບບ MCA ໃນວິຊາວິທະຍາດສາດລວມເຂົ້າກັບການຈໍາລອງ, ເຊິ່ງຕ້ອງການໃຫ້ນັກຮຽນເຮັດການທົດລອງເພື່ອຕອບຄໍາຖາມ.

ທັງໝົດເຫຼົ່ານີ້ໃຫ້ໂອກາດແກ່ນັກຮຽນນໍາໃຊ້ຄວາມຄິດອັນຈິງຈັງທີ່ຈໍາເປັນເພື່ອຄວາມສໍາເລັດໃນການສຶກສາຢູ່ວິທະຍາໄລ ແລະໃນອາຊີບ ແລະ ສະແດງອອກໃນສິ່ງທີ່ພວກເຂົາຮູ້ ແລະ ສາມາດເຮັດໄດ້.

## ມີຂີດຈໍາກັດຢູ່ໃນການສອບເສັງກັບທີ່ບໍ?

ດັ່ງທີ່ໄດ້ກ່າວໄວ້ຢູ່ໃນລັດຖະບັນຍັດຂອງລັດມິນີໂຊຕາ, ຂໍ້ 120B.301, ຈໍານວນເວລາສະສົມທັງໝົດທີ່ໃຊ້ໃນການປະເມີນໃນທົ່ວເຂດການສຶກສາ ຫຼື ທົ່ວໂຮງຮຽນທີ່ຍອມຮັບໃນທ້ອງຖິ່ນຕ້ອງບໍ່ເກີນ 10 ຊົ່ວໂມງຕໍ່ປີຮຽນສໍາລັບນັກຮຽນຢູ່ໃນເກຣດ 1-6. ຈໍານວນເວລາສະສົມທັງໝົດທີ່ໃຊ້ໃນການປະເມີນໃນທົ່ວເຂດການສຶກສາ ຫຼື ທົ່ວໂຮງຮຽນທີ່ຍອມຮັບໃນທ້ອງຖິ່ນຕ້ອງບໍ່ເກີນ 11 ຊົ່ວໂມງຕໍ່ປີຮຽນສໍາລັບນັກຮຽນຢູ່ໃນເກຣດ 7-12. ຂີດຈໍາກັດເຫຼົ່ານີ້ບໍ່ລວມມີການສອບເສັງທົ່ວລັດ.

ໃນຄວາມພະຍາຍາມໃຫ້ມີຄວາມໂປ່ງໃສ, ລັດຖະບັນຍັດຍັງຮຽກຮ້ອງໃຫ້ເຂດການສຶກສາ ຫຼື ໂຮງຮຽນເຊົ່າເຜີຍແຜ່ປະຕິທິນກວາມລວມເລື່ອງການສອບເສັງມາດຕະຖານທີ່ຈະໄດ້ດໍາເນີນການຢູ່ໃນເຂດໂຮງຮຽນ ຫຼື ໂຮງຮຽນເຊົ່າລົງໃນໃນເວັບໄຊຂອງຕົນເອງໃນລະຫວ່າງປີຮຽນນັ້ນກ່ອນມື້ທໍາອິດຂອງປີຮຽນແຕ່ລະປີ. ປະຕິທິນຕ້ອງມີເຫດຜົນສໍາລັບການດໍາເນີນການປະເມີນແຕ່ລະຄັ້ງ ແລະ ບອກແຈ້ງວ່າ ການປະເມີນແມ່ນເປັນທາງເລືອກຂອງທ້ອງຖິ່ນອັນໜຶ່ງ ຫຼື ເປັນໄປຕາມກົດໝາຍຂອງລັດ ຫຼື ຂອງລັດຖະບານກາງກໍານົດ.

## ຈະເປັນແນວໃດ ຖ້າຂ້າພະເຈົ້າເລືອກບໍ່ໃຫ້ນັກຮຽນຂອງຂ້າພະເຈົ້າເຂົ້າຮ່ວມ?

ພໍ່ແມ່/ຜູ້ປົກຄອງມີສິດບໍ່ໃຫ້ນັກຮຽນຂອງເຂົາເຈົ້າເຂົ້າຮ່ວມໃນການປະເມີນຕາມມາດຕະຖານທີ່ລັດກໍານົດໄດ້. ລັດຖະບັນຍັດຂອງລັດມິນີໂຊຕາຮຽກຮ້ອງໃຫ້ທາງພະແນກໃຫ້ຂໍ້ມູນກ່ຽວກັບການປະເມີນທົ່ວລັດແກ່ພໍ່ແມ່/ຜູ້ປົກຄອງ ແລະ ໃຫ້ສົ່ງແບບຟອມໃຫ້ປະກອບ ຖ້າພວກເຂົາປະຕິເສດທີ່ຈະໃຫ້ນັກຮຽນຂອງພວກເຂົາເຂົ້າຮ່ວມ. ແບບຟອມນີ້ແມ່ນມີຢູ່ໃນໜ້າຕໍ່ໄປ ແລະ ມີບ່ອນໃຫ້ຂຽນເຫດຜົນສໍາລັບການປະຕິເສດທີ່ຈະເຂົ້າຮ່ວມໃສ່. ເຂດການສຶກສາຂອງນັກຮຽນທ່ານອາດຈະຕ້ອງການຂໍ້ມູນເພີ່ມເຕີມ.

ໂຮງຮຽນ ຫຼື ເຂດການສຶກສາອາດຈະມີຜົນທີ່ເກີດຂຶ້ນຕາມມາເພີ່ມເຕີມເກີນກວ່າທີ່ໄດ້ກ່າວໄວ້ຢູ່ໃນເອກະສານນີ້ສໍາລັບນັກຮຽນທີ່ບໍ່ເຂົ້າຮ່ວມໃນການປະເມີນຕາມມາດຖານທີ່ລັດກໍານົດ. ຍັງອາດຈະມີຜົນທີ່ເກີດຂຶ້ນຕາມມານໍາອີກຕໍ່ກັບການບໍ່ເຂົ້າຮ່ວມໃນການປະເມີນທີ່ເລືອກໄວ້ ແລະ ດໍາເນີນການຢູ່ໃນລະດັບທ້ອງຖິ່ນ. ກະລຸນາຕິດຕໍ່ຫາໂຮງຮຽນຂອງທ່ານ ເພື່ອຂໍຂໍ້ມູນເພີ່ມເຕີມກ່ຽວກັບການຕັດສິນໃຈຂອງທ້ອງຖິ່ນ.

### ນັກຮຽນຈະດໍາເນີນການປະເມີນເມື່ອໃດ?

ແຕ່ລະໂຮງຮຽນກໍານົດການສອບເສັງຂອງພວກເຂົາຢູ່ພາຍໃນກອບກໍານົດການສອບເສັງຂອງລັດ. ຕິດຕໍ່ໂຮງຮຽນຂອງນັກຮຽນທ່ານ ເພື່ອຂໍຂໍ້ມູນກ່ຽວກັບມື້ສອບເສັງສະເພາະ.

- ກອບກໍານົດການສອບເສັງ MCA ແລະ MTAS ເລີ່ມຕົ້ນໃນເດືອນມີນາ ແລະ ສິ້ນສຸດໃນເດືອນພຶດສະພາ.
- ກອບກໍານົດການສອບເສັງ ACCESS ແລະ ACCESS for ELLs ທາງເລືອກອື່ນແມ່ນເລີ່ມຕົ້ນໃນທ້າຍເດືອນມັງກອນ ແລະ ສິ້ນສຸດໃນເດືອນມີນາ

### ຂ້ອຍຈະໄດ້ຮັບຜົນຂອງນັກຮຽນຂ້ອຍເມື່ອໃດ?

ໃນແຕ່ລະຊໍາເມີ (ພາກລະດູຮ້ອນ), ບົດລາຍງານຂອງນັກຮຽນແຕ່ລະຄົນແມ່ນຈະຖືກສົ່ງໄປໃຫ້ໂຮງຮຽນ ແລະ ເຂດການສຶກສາ ແລະ ສົ່ງໃຫ້ກັບຄອບຄົວບໍ່ຊ້າໄປກວ່າກອງປະຊຸມໃນລະດູໃບໄມ້ຫຼົ່ນ. ບົດລາຍງານແມ່ນສາມາດນໍາໄປໃຊ້ເບິ່ງຄວາມຄືບໜ້າຂອງລູກທ່ານ ແລະ ຊ່ວຍເປັນຂໍ້ແນະນໍາໃນການສອນໃນອະນາຄົດ.

### ການສອບເສັງໃຊ້ເວລາຫຼາຍປານໃດ?

ການປະເມີນທົ່ວລັດແມ່ນເຮັດປີລະເທື່ອ; ນັກຮຽນສ່ວນໃຫຍ່ແມ່ນສອບເສັງທາງອອນລາຍ. ໂດຍສະເລ່ຍແລ້ວນັ້ນ, ເວລາທີ່ໃຊ້ໃນການປະເມີນທົ່ວລັດແມ່ນ**ໜ້ອຍກວ່າ 1 ເປີເຊັນຂອງເວລາການສອນ**ຢູ່ໃນປີຮຽນປີໜຶ່ງ. ການປະເມີນແມ່ນບໍ່ໄດ້ຄິດໄລ່ເວລາ ແລະ ນັກຮຽນສາມາດສືບຕໍ່ເຮັດການປະເມີນຕາມທີ່ເຂົາເຈົ້າຕ້ອງການ.

### ເປັນຫຍັງຈຶ່ງຄືວ່າ ນັກຮຽນຂອງຂ້ອຍຕ້ອງໄດ້ສອບເສັງຫຼາຍອັນ?

ບົດສອບເສັງທີ່ຕ້ອງການໃນທົ່ວລັດແມ່ນໄດ້ຈໍາກັດຢູ່ແຕ່ຕາມອັນທີ່ໄດ້ກໍານົດໄວ້ຢູ່ໃນເອກະສານນີ້. ເຂດການສຶກສາຫຼາຍແຫ່ງທໍາການຕັດສິນໃຈດ້ວຍຕົວເອງ ເພື່ອດໍາເນີນການສອບເສັງເພີ່ມເຕີມທີ່ລັດບໍ່ໄດ້ກໍານົດໃຫ້. ຕິດຕໍ່ຫາເຂດການສຶກສາຂອງທ່ານ ເພື່ອຂໍຂໍ້ມູນເພີ່ມເຕີມ.

### ຂ້າພະເຈົ້າຈະເອົາຂໍ້ມູນເພີ່ມເຕີມໄດ້ຢູ່ໃສ?

ນັກຮຽນ ແລະ ຄອບຄົວສາມາດຊອກເບິ່ງຂໍ້ມູນເພີ່ມເຕີມໄດ້ຢູ່ໃນ ໜ້າການສອບເສັງທົ່ວລັດ (education. mn.gov > ນັກຮຽນ ແລະ ຄອບຄົວ > ໂຄງການ ແລະ ການລິເລີ່ມ > ການສອບເສັງທົ່ວລັດ).

ລັດຖະບັນຍັດຂອງລັດມິນີໂຊຕາ, ຂໍ້ທີ 120B.31, ຂໍ້ຍ່ອຍ 4a ຮຽກຮ້ອງໃຫ້ຜູ້ກວດການສ້າງ ແລະ ເຜີຍແຜ່ແບບຟອມໃຫ້ກັບພໍ່ແມ່ ແລະ ຜູ້ປົກຄອງປະກອບ ຖ້າພວກເຂົາປະຕິເສດທີ່ຈະໃຫ້ນັກຮຽນຂອງພວກເຂົາເຂົ້າຮ່ວມໃນການປະເມີນຕາມມາດຕະຖານທີ່ລັດກຳນົດ. ເຂດການສຶກສາຂອງນັກຮຽນທ່ານອາດຈະຕ້ອງການຂໍ້ມູນເພີ່ມເຕີມ. ເຂດການສຶກສາໂຮງຮຽນຕ້ອງໂພສແບບຟອມສາມໜ້ານີ້ລົງໃນເວັບໄຊຂອງເຂດການສຶກສາ ແລະ ເອົາເຂົ້າໃນປຶ້ມຄູ່ມືນັກຮຽນເຂດການສຶກສານຳ.

## ການປະຕິເສດຂອງພໍ່ແມ່/ຜູ້ປົກຄອງຕໍ່ການເຂົ້າຮ່ວມໃນການປະເມີນທົ່ວລັດຂອງນັກຮຽນ

**ເພື່ອບໍ່ເຂົ້າຮ່ວມໃນການປະເມີນທົ່ວລັດ, ພໍ່ແມ່/ຜູ້ປົກຄອງຕ້ອງປະກອບແບບຟອມນີ້ ແລະ ສົ່ງມັນກັບຄືນໄປຫາໂຮງຮຽນຂອງນັກຮຽນ.**

*ເພື່ອໃຫ້ການສະໜັບສະໜູນການວາງແຜນຂອງເຂດການສຶກສາໂຮງຮຽນໄດ້ດີທີ່ສຸດ, ກະລຸນາສົ່ງແບບຟອມນີ້ໃຫ້ກັບໂຮງຮຽນຂອງນັກຮຽນບໍ່ໃຫ້ເກີນວັນທີ 15 ມັງກອນຂອງປີຮຽນ. ສຳລັບນັກຮຽນຜູ້ທີ່ລົງທະບຽນຫຼັງຈາກກອບກຳນົດການສອບເສັງທົ່ວລັດເລີ່ມຕົ້ນ, ກະລຸນາສົ່ງແບບຟອມພາຍໃນສອງອາທິດຂອງການລົງທະບຽນ. ແບບຟອມປະຕິເສດໃໝ່ແມ່ນຕ້ອງໄດ້ເຮັດໃນ**ແຕ່ລະປີ** ທີ່ພໍ່ແມ່/ຜູ້ປົກຄອງເລືອກທີ່ຈະບໍ່ໃຫ້ນັກຮຽນເຂົ້າຮ່ວມໃນການປະເມີນທົ່ວລັດ.*

ວັນທີ________________________(ແບບຟອມນີ້ແມ່ນສາມາດໃຊ້ໄດ້ສຳລັບປີຮຽນ 20___________ຫາ 20______**ເທົ່ານັ້ນ**.)

ຊື່ນັກຮຽນ__________________________________________ ຕົວອັກສອນຫຍໍ້ຊື່ກາງນັກຮຽນ______________________

ນາມສະກຸນນັກຮຽນ____________________________________ ວັນເດືອນປີເກີດນັກຮຽນ______________________

ເຂດການສຶກສາ/ໂຮງຮຽນຂອງນັກຮຽນ______________________________________ ເກຣດ______________________

**ກະລຸນາລົງລາຍເຊັນຊື່ຫຍໍ້ໃສ່ ເພື່ອຢັ້ງຢືນວ່າ ທ່ານໄດ້ຮັບ ແລະ ທົບທວນເບິ່ງຂໍ້ມູນກ່ຽວກັບການສອບເສັງທົ່ວລັດແລ້ວ.**

______ ຂ້າພະເຈົ້າໄດ້ຮັບຂໍ້ມູນກ່ຽວກັບການປະເມີນທົ່ວລັດ ແລະ ເລືອກທີ່ຈະບໍ່ໃຫ້ນັກຮຽນຂອງຂ້າພະເຈົ້າເຂົ້າຮ່ວມແລ້ວ. MDE ມີ*ຄຳແນະນຳ ແລະ ການປະຕິເສດຂອງພໍ່ແມ່/ຜູ້ປົກຄອງສຳລັບການມີສ່ວນຮ່ວມຂອງນັກຮຽນໃນການສອບເສັງໃນທົ່ວລັດ*ໃຫ້ຢູ່ໃນເວັບໄຊ MDE (education.mn.gov > ນັກຮຽນ ແລະ ຄອບຄົວ > ໂຄງການ ແລະ ການລິເລີ່ມ > ການສອບເສັງທົ່ວລັດ).

| ເຫດຜົນທີ່ປະຕິເສດ: |
|---|
| |

ກະລຸນາບອກການປະເມີນທົ່ວລັດທີ່ທ່ານກຳລັງບໍ່ໃຫ້ນັກຮຽນເຂົ້າຮ່ວມໃນປີຮຽນນີ້:

_________ MCA/MTAS ພາກການອ່ານ

_________ MCA/MTAS ຄະນິດສາດ

_________ MCA/MTAS ວິຊາວິທະຍາສາດ

_________ ACCESS ຫຼື ACCESS for ELLs ທາງເລືອກອື່ນ

ຕິດຕໍ່ໂຮງຮຽນ ຫຼື ເຂດການສຶກສາຂອງທ່ານ ເພື່ອຂໍແບບຟອມການບໍ່ເຂົ້າຮ່ວມໃນການປະເມີນໃນທ້ອງຖິ່ນ.

**ຂ້າພະເຈົ້າເຂົ້າໃຈວ່າ ໂດຍການລົງລາຍເຊັນໃສ່ແບບຟອມນີ້, ໂຮງຮຽນຂອງຂ້າພະເຈົ້າ ແລະ ຂ້າພະເຈົ້າອາດຈະເສຍຂໍ້ມູນທີ່ມີຄຸນຄ່າກ່ຽວກັບວ່າ ນັກຮຽນຂອງຂ້າພະເຈົ້າມີຄວາມກ້າວໜ້າທາງດ້ານຫຼັກສູດດີປານໃດ. ດ້ວຍເຫດຜົນໄດ້ຮັບດັ່ງກ່າວ, ນັກຮຽນຂອງຂ້າພະເຈົ້າຈະບໍ່ໄດ້ຮັບຄະແນນບຸກຄົນ. ການປະຕິເສດເຂົ້າຮ່ວມໃນການປະເມີນທົ່ວລັດຍັງອາດຈະມີຜົນກະທົບຕໍ່ໂຮງຮຽນ, ເຂດການສຶກສາ ແລະ ຄວາມພະຍາຍາມຂອງລັດທີ່ຈະກະຈາຍຊັບພະຍາກອນ ແລະ ໃຫ້ການສະໜັບສະໜູນການຮຽນຂອງນັກຮຽນໃຫ້ສະເໝີພາບກັນ; ເພື່ອຈຸດປະສົງການຄິດໄລ່ຄວາມຮັບຜິດຊອບຂອງໂຮງຮຽນ ແລະ ເຂດການສຶກສາ, ນັກຮຽນຂອງຂ້າພະເຈົ້າຈະບໍ່ຖືກພິຈາລະນາວ່າ "ເກັ່ງ".**

**ຖ້ານັກຮຽນຂອງຂ້າພະເຈົ້າຢູ່ໃນໄຮສະກູລ, ຂ້າພະເຈົ້າເຂົ້າໃຈວ່າ ໂດຍການເຊັນຊື່ໃສ່ແບບຟອມນີ້ ນັກຮຽນຂອງຂ້າພະເຈົ້າຈະບໍ່ມີຄະແນນ MCA ທີ່ສາມາດປະຢັດເງິນ ແລະ ເວລາຂອງລາວໄດ້ ໂດຍການບໍ່ຕ້ອງຮຽນວິຊາທີ່ບໍ່ໄດ້ເຄຣດິດ, ແກ້ໄຂຄືນຢູ່ໃນວິທະຍາໄລ ຫຼື ມະຫາວິທະຍາໄລລັດມິນີໂຊຕາ.**

ຊື່ພໍ່ແມ່/ຜູ້ປົກຄອງ (ຂຽນຊື່ແຈ້ງ) ____________________________________________

ລາຍເຊັນຂອງພໍ່ແມ່/ຜູ້ປົກຄອງ ____________________________________________

| ໃຫ້ທາງພະນັກງານໂຮງຮຽນ ຫຼື ເຂດການສຶກສາຕອບເທົ່ານັ້ນ. | ເລກບັດນັກຮຽນ ຫຼື ເລກ MARSS ______________________________ |
|---|---|